ສຳນັກງານ ຄຄຊ
ຂາເຂົ້າ ເລກທີ...02........
ວັນທີ..02 JAN 2019
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 53 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 31 ທັນວາ 2018

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ
## ປະຈຳອາທິດທີ 10-14/12/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

**I. ວຽກງານການເມືອງແນວຄິດ**

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນໜຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

**II. ການເຄື່ອນໄຫວວຽກງານວິຊາສະເພາະ**

**1. ສະພາບເສດຖະກິດເງິນຕາສາກົນ**

**1.1 ອັດຕາແລກປ່ຽນສາກົນ**

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0,66% ທຽບໃສ່ເອີໂຣ ເນື່ອງຈາກຕົວເລກຜົນຜະລິດອຸດສາຫະກຳ ເພີ່ມຂຶ້ນຢູ່ໃນລະດັບ 0,6% ໃນເດືອນ 11/2018 ຈາກຫຼຸດລົງມາຢູ່ໃນລະດັບ 0,2% ໃນເດືອນຜ່ານມາ. ພ້ອມກັນນັ້ນ, ຕົວເລກຈຳນວນປະຊາຊົນທີ່ຂໍສະຫວັດດີການຫວ່າງງານຄັ້ງທຳອິດຫຼຸດລົງມາຢູ່ໃນ ຈຳນວນ 206,000 ຄົນ ໃນອາທິດທີ 08/12/2018 ຈາກຈຳນວນ 233,000 ຄົນ ໃນອາທິດທີ່ຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ<br>**03-07/12/2018** | ອາທິດນີ້<br>**10-14/12/2018** | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1365 | 1,1291 | 0,66% |
| ເຢນ/ໂດລາ | 112,83 | 113,52 | -0,61% |
| ບາດ/ໂດລາ | 32,800 | 32,790 | 0,03% |
| ເປໂຊ/ໂດລາ | 52,77 | 53,08 | -0,59% |
| ຣູເປັຍ/ໂດລາ | 14.465,00 | 14.580,00 | -0,79% |
| ໂດລາສິງກະໂປ/ໂດລາ | 1,3695 | 1,3761 | -0,48% |
| ຢວນ/ໂດລາ | 6,8814 | 6,9015 | -0,29% |

**1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ**

- ລາຄານ້ຳມັນ ເພີ່ມຂຶ້ນ 3,10% ເປັນ 52,50 ໂດລາ/ບາເຣວ ເນື່ອງຈາກຄວາມຕ້ອງການນ້ຳມັນຂອງ ສະຫະລັດອາເມລິກາ ເພີ່ມຂຶ້ນ ເຫັນໄດ້ຈາກຄັງສຳຮອງນ້ຳມັນດິບຂອງ ສະຫະລັດອາເມລິກາ ຫຼຸດລົງ ມາຢູ່ໃນລະດັບ 1,47 ລ້ານບາເຣວ ໃນອາທິດທີ 07/12/2018 ຈາກເພີ່ມຂຶ້ນຮອດລະດັບ 3,81 ລ້ານບາເຣວ ໃນອາທິດຜ່ານມາ;
- ລາຄາຄຳ ຫຼຸດລົງ 0,05% ເປັນ 1.239,18 ໂດລາ/ອອນ ຍ້ອນນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳເພື່ອເກງກຳໄລ ພາຍຫຼັງລາຄາຄຳໄດ້ເພີ່ມຂຶ້ນໃນອາທິດຜ່ານມາ ບວກກັບການແຂງຄ່າ ຂອງຄ່າເງິນໂດລາ.

**2. ສະພາບການຊື້-ຂາຍອັດຕາແລກປ່ຽນ**

**2.1 ສະພາບອັດຕາແລກປ່ຽນພາຍໃນ**

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາ ແຂງຄ່າຂຶ້ນ 0,15% ແລະ ແຂງຄ່າຂຶ້ນ 0,11% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 3,46% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 4,01% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 03-07/12/2018 | | | ອາທິດນີ້ 10-14/12/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.608,65 | 8.640,01 | 8.623,86 | 8.597,76 | 8.627,53 | 8.610,91 | 0,13% | 0,14% | 0,15% | -3,45% | -3,48% | -3,46% |
| ບາດ | 266,45 | 267,56 | 267,13 | 265,60 | 267,58 | 266,85 | 0,32% | -0,01% | 0,11% | -3,98% | -4,04% | -4,01% |

**2.2 ສະພາບຖານເງິນຕາແລະປະລິມານເງິນ M2**

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 3,04% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີ ຜ່ານມາ ເພີ່ມຂຶ້ນ 15,64%;
- ປະລິມານເງິນ M2 ຫຼຸດລົງ 0,04% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 7,63%.

**2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ**

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (07-13/12/2018) ເຫັນວ່າ ທທກ ຊື້ເງິນໂດລາສຸດທິ 0,34 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 32,39 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 32,05 ລ້ານໂດລາ) ແຕ່ ຂາຍເງິນບາດສຸດທິ 211,41 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 244,73 ລ້ານບາດ ແລະ ຂາຍເງິນບາດໄດ້ 456,14 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າເງິນໂດລາ ເພີ່ມຂຶ້ນ 16,89% ແຕ່ ເງິນບາດ ຫຼຸດລົງ 29,32%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ດັດສົມໂດຍການຂາຍເງິນໂດລາສຸດທິໃຫ້ທະນາຄານທຸລະກິດ ຈຳນວນ 12,13 ລ້ານໂດລາ ແລະ ດັດສົມໂດຍການຂາຍເງິນບາດສຸດທິ ຈຳນວນ 20,27 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 9,84 ລ້ານໂດລາ ແລະ ເງິນບາດ ຈຳນວນ 127,69 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆເຫັນວ່າ: ບໍ່ມີການຊື້-ຂາຍເງິນໂດລາ ແລະ ເງິນບາດ.

**ສະພາບການຊື້-ຂາຍເງິນຕາຕ່າງປະເທດ** (ຫົວໜ່ວຍ: ລ້ານ)

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

| | ອາທິດທີ່ຜ່ານມາ 30/11-06/12/2018 | | ອາທິດນີ້ 07-13/12/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **31,17** | **345,56** | **32,39** | **244,73** | **3,91%** | **-29,18%** |
| - ທ/ຄທຸລະກິດລັດ | 9,12 | 158,96 | 12,34 | 114,43 | 35,31% | -28,01% |
| - ທ/ຄທຸລະກິດອື່ນໆ | 22,05 | 186,60 | 20,05 | 130,30 | -9,07% | -30,17% |
| **2. ການຂາຍເງິນຕາຕ່າງປະເທດ** | **23,96** | **646,03** | **32,05** | **456,14** | **33,76%** | **-29,39%** |
| - ທ/ຄທຸລະກິດລັດ | 12,25 | 202,33 | 16,89 | 135,50 | 37,88% | -33,03% |
| - ທ/ຄທຸລະກິດອື່ນໆ | 11,71 | 443,70 | 15,16 | 320,64 | 29,46% | -27,73% |
| **ຊື້-ຂາຍສຸດທິ ທທກ** | **7,21** | **-300,47** | **0,34** | **-211,41** | **-95,28%** | **-29,64%** |
| - ຜິດດ່ຽງຊື້-ຂາຍ | 23,13% | -86,95% | 1,05% | -86,38% | -94,46% | -0,65% |
| **- ມູນຄ່າການຊື້-ຂາຍ** | **55,13** | **991,59** | **64,44** | **700,87** | **16,89%** | **-29,32%** |
| **3. ການຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ** | **-6,62** | **-70,06** | **-12,13** | **-20,27** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,10 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 6,62 | 70,06 | 12,23 | 20,27 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **3,40** | **70,00** | **9,84** | **127,69** | | |
| **5. ທຫລ ກັບ ພາກສ່ວນອື່ນໆ** | **0,00** | **0,00** | **0,00** | **0,00** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 12/2018 ຄາດວ່າຈະຢູ່ໃນລະດັບ 2,04%.

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ**

ທະນາຄານແຫ່ງ ສປປ ລາວ ໄດ້ມີກະແສເງິນໄຫຼອອກສຸດທິ ຜ່ານລະບົບທະນາຄານ ຈຳນວນ 53,62 ລ້ານໂດລາສະຫະລັດ. ໃນນັ້ນ, ປະຈຳອາທິດວັນທີ (07-13/12/2018) ໃນນັ້ນ, ສຳລັບກະແສເງິນໄຫຼອອກ ມີຈຳນວນ 157,42 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຊຳລະຄ່ານຳເຂົ້າສິນຄ້າ ຈຳນວນ 131,96 ລ້ານໂດລາສະຫະລັດ, ຈ່າຍຄ່າບໍລິການ ຈຳນວນ 10,75 ລ້ານໂດລາສະຫະລັດ ແລະ ລາຍຈ່າຍອື່ນໆ ຈຳນວນ 8,08 ລ້ານໂດລາສະຫະລັດ), ກະແສເງິນໄຫຼເຂົ້າແມ່ນມີຈຳນວນ 103,80 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຮັບຈາກການສົ່ງອອກສິນຄ້າ ຈຳນວນ 45,47 ລ້ານໂດລາສະຫະລັດ, ຈາກການໃຫ້ບໍລິການ ຈຳນວນ 35,08 ລ້ານໂດລາສະຫະລັດ ແລະ ຈາກການລົງທຶນໂດຍກົງຈາກຕ່າງປະເທດ ຈຳນວນ 12,57 ລ້ານໂດລາສະຫະລັດ).

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 764 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 246 ສະບັບ ເທົ່າກັບ 47,49% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 382,95 ຕື້ກີບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 43,32 ຕື້ກີບ ເທົ່າກັບ 10,16%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (07-13/12/2018) ມີທັງໝົດ 4.391 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- ສະກຸນເງິນກີບ: ມີການເຄື່ອນໄຫວຈຳນວນ 4.174 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເພີ່ມຂຶ້ນ ຈຳນວນ 438 ຕື້ກີບ ຈາກ 1.174,73 ຕື້ກີບ ມາເປັນ 1.612,54 ຕື້ກີບ ເທົ່າກັບ 37,26%;

- **ກະຊວງການເງິນ**: ມີການເຄື່ອນໄຫວຈຳນວນ 217 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ ຈຳນວນ 2,33 ຕື້ກີບ ຈາກ 96,31 ຕື້ກີບ ມາເປັນ 98,64 ຕື້ກີບ ເທົ່າກັບ 2,41%.

**4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>**

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 821,28 ຈຸດ ຫຼຸດລົງ ຈາກ 825,44 ຈຸດ ຫຼື ເທົ່າກັບ 0,50% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 283.300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,28 ຕື້ກີບ ເພີ່ມຂຶ້ນ 175,06% ທຽບໃສ່ອາທິດຜ່ານມາ, ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 45,86% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດການຫຼຸດລົງຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວຫຼຸດລົງຂອງລາຄາຮຸ້ນ EDL-GEN.

**<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u>**

| ບໍລິສັດ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ | ມູນຄ່າການ ຊື້-ຂາຍ | ລາຄາ ປ່ຽນແປງ (%) |
| **BCEL** | 63.500 | 349,525,000 | 5.550 | 126.200 | 695.855.000 | 5.600 | 98,74 | 99,09 | 0,90 |
| **EDL-GEN** | 26.300 | 105.170.000 | 4.000 | 138.500 | 547.085.000 | 3.950 | 426,62 | 420,19 | -1,25 |
| **LWPC** | - | - | 8.000 | - | - | 8.000 | - | - | - |
| **PTL** | 1.200 | 1.700.000 | 1.400 | 1.900 | 2.700.000 | 1.400 | 58,33 | 58,82 | - |
| **SVN** | - | - | 1.650 | 1.200 | 2.090.000 | 1.750 | - | - | 6,06 |
| **PCD** | - | - | 1.200 | 1.200 | 1.440.000 | 1.200 | - | - | - |
| **LCC** | - | - | 1.700 | 9.400 | 17.785.000 | 1.900 | - | - | 11,76 |
| **MHTL** | 2.100 | 5.990.000 | 2.900 | 4.900 | 14.135.000 | 2.900 | 133,33 | 135,98 | - |
| **LAT** | 4.800 | 3.360.000 | 700 | - | - | 700 | -100 | -100,00 | - |
| ທັງໝົດ | 97.900 | 465.745.000 | | 283.300 | 1.281.090.000 | | 189,38 | 175,06 | |

**5. <u>ວຽກງານອື່ນໆທີ່ພົ້ນເດັ່ນ.</u>**

- **ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ພິທີຕ່າງໆ**: :❶ ກອງປະຊຸມທ່ານນາຍົກ-ຮອງນາຍົກລັດຖະມົນຕີ ປະຈຳເດືອນ ທັນວາ 2018; ❷ ກອງປະຊຸມສຳມະນາຂະແໜງການເງິນອາຊຽນ +3 ປະຈຳປີ 2018 (ATFF) ແລະ ກອງປະຊຸມຮອງລັດຖະມົນຕີການເງິນ ແລະ ຮອງຜູ້ວ່າທະນາຄານກາງອາຊຽນ +3; ❸ກອງປະຊຸມເປີດກວ້າງທາບທາມຮ່າງດຳລັດວ່າດ້ວຍ ສູນຂໍ້ມູນຂ່າວສານສິນເຊື່ອ CIB; ❹ ກອງປະຊຸມປຶກສາຫາລືກ່ຽວກັບການຮ່າງ ນິຕິກຳລຸ່ມກົດໝາຍວ່າດ້ວຍລະບົບການຊຳລະ; ❺ ກອງປະຊຸມຄະນະປັບປຸງດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ທຫລ; ❻ ກອງປະຊຸມຄະນະຄົ້ນຄວ້າຮ່າງດຳລັດວ່າດ້ວຍວຽກງານການບັນຊີ ແລະ ການເງິນຂອງ ທຫລ ແລະ ❼ ຈັດສຳມະນາໃນຫົວຂໍ້"ວຽກງານການເງິນ ແລະ ຫຼັກການບັນຊີທະນາຄານກາງ" ຮ່ວມກັບທະນາຄານແຫ່ງລັດ ສສ. ຫວຽດນາມ;
- ສຳເລັດຕ້ອນຮັບການເຂົ້າຢ້ຽມຂໍ່ານັບທ່ານ ຮອງປະທານທະນາຄານ SacomBank; ສະຖານທູດຍີ່ປຸ່ນ ປະຈຳ ສປປ ລາວ ແລະ ບໍລິສັດ BNK ເຊົ່າສິນເຊື່ອ.

**III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>**

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບັ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;
- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ພ້ອມທັງສືບຕໍ່ຮ່ວມເປັນຄະນະສະເພາະກິດລົງກວດກາການເຄື່ອນໄຫວຮ້ານແລກປ່ຽນເງິນຕາ ຢ່າງໃກ້ຊິດ;
- ສືບຕໍ່ຄົ້ນຄວ້າ ນຳສະເໜີແຜນພິມເງິນ ເພື່ອກະຕຸ້ນເສດຖະກິດ ຕາມແຜນເງິນຕາປະຈຳປີ 2019 ທີ່ໄດ້ກຳນົດໄວ້;
- ສືບຕໍ່ກະກຽມເງື່ອນໄຂໃຫ້ແກ່ກອງປະຊຸມສະພາບໍລິຫານ ທຫລ ຄັ້ງທີ II ປີ 2018.
- **ກະກຽມຈັດກອງປະຊຸມ, ເຂົ້າຮ່ວມກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ແລະ ກົດໝາຍວ່າດ້ວຍລະບົບການຊຳລະ; ❷ ກອງປະຊຸມຮັບຟັງການສະຫຼຸບຜົນການຈັດຕັ້ງປະຕິບັດໂຄງການ ມາດຕະຖານສາກົນດ້ານການບັນຊີ; ❸ ພິທີເປີດນຳໃຊ້ກົນໄກການເກັບພາສີທີ່ດິນຜ່ານລະບົບທະນາຄານລະຫວ່າງ ກົມສ່ວຍສາອາກອນ ແລະ ທະນາຄານການຄ້າຕ່າງປະເທດລາວ; ❹ ເຂົ້າຮ່ວມການຖອດຖອນບົດຮຽນກ່ຽວກັບວຽກງານຄຸ້ມຄອງມະຫາພາກທາງດ້ານສິນເຊື່ອ ແລະ ນະໂຍບາຍສິນເຊື່ອເພື່ອສົ່ງເສີມທຸລະກິດຂະໜາດນ້ອຍ ແລະ ກາງ; ❺ ກອງປະຊຸມສຳມະນາຮ່ວມກັບ ສ. ເກົາຫຼີ ໃນຫົວຂໍ້ "ການເປີດເຜີຍຂໍ້ມູນ, ລະບຽບການດ້ານການອອກຫຼັກຊັບ ແລະ ລະບຽບການດ້ານການບໍລິຫານການລົງທຶນ".
- ກະກຽມຕ້ອນຮັບການເຂົ້າຢ້ຽມຂໍານັບຈາກທະນາຄານກະສິກອນໄທ.

ຮຸ ຫົວໜ້າຫ້ອງການ

ພູມມະລີ ສີຣິພົນເດດ